ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********000**********

ກະຊວງ ໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການ

ເລກທີ: 2265 ປທສ/.ຫກ

ນະຄອນຫລວງວຽງຈັນ, ວັນທີ: 16 DEC 2014

## ແຈ້ງການ

ເຖິງ: ບັນດາຮ້ານຂາຍເຄື່ອງຄອມພິວເຕີ ແລະ ຮ້ານໂທລະສັບມືຖື..........

ເລື່ອງ: ສະເໜີໃຫ້ນຳເອົາຟອນເພັດຊະລາດ ແລະ ແປ້ນພິມພາສາລາວເຂົ້າໃນເຄື່ອງຄອມພິວເຕີ ແລະ ມືຖືຂອງທ່ານກ່ອນການຈຳໜ່າຍໃນ ສປປ ລາວ.

ກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຊາບວ່າ: ປະຈຸບັນທາງກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ສຳເລັດການພັດທະນາຟອນເພັດຊະລາດ ແລະ ແປ້ນພິມພາສາລາວ ສຳລັບລະບົບຄອມພິວເຕີ-ມືຖື ແລະ ບັນດາໂປຣແກຣມຟອນ ແລະ ແປ້ນພິມດັ່ງກ່າວກໍ່ໄດ້ອັບໂຫຼດຂຶ້ນເທິງ Apple App store, Goolgle Play, Window Phone Store ແລະ ເວັບໄຊຕ່າງໆແລ້ວ ເຊິ່ງທ່ານສາມາດໄປດາວໂຫຼດມານຳໃຊ້ຕາມລຸ້ນຂອງ OS ດັ່ງລຸ່ມນີ້:

1. ສຳລັບເຄື່ອງຄອມພິວເຕີລະບົບປະຕິບັດການ Window ສາມາດໄປດາວໂຫຼດຟອນເພັດຊະລາດໄດ້ຈາກເວັບໄຊເພັດຊະລາດ www.phetsarath.gov.la. ຊື່ຟາຍ Phetsarath OT.ttf.
2. ສຳລັບມືຖືທີ່ໃຊ້ລະບົບປະຕິບັດການ iOS ສາມາດດາວໂຫຼດແປ້ນພິມເພັດຊະລາດໄດ້ທີ່ Apple App Store ຊື່ຟາຍ Lao Keyboard (MPT).
3. ສຳລັບມືຖືທີ່ໃຊ້ລະບົບປະຕິບັດການ Android ສາມາດດາວໂຫຼດຟອນເພັດຊະລາດ ແລະ ແປ້ນພິມໄດ້ທີ່ Google play ແລະ www.phetsarath.gov.la ຊື່ຟາຍຂອງຜະລິດຕະພັນ LaoKeyboard ແລະ ຟອນ PhetsarathOT.
4. ສຳລັບມືຖືທີ່ໃຊ້ລະບົບປະຕິບັດການ window Phone ທ່ານສາມາດດາວໂຫຼດໄດ້ທີ່ Window phone store ຊື່ຟາຍ LAO TYPING.

ທ່ານສາມາດເຂົ້າໄປດາວໂຫຼດເອົາວິທີຕິດຕັ້ງ ແລະ ນຳໃຊ້ບັນດາໂປຣແກຣມຟອນເພັດຊະລາດ ແລະ ແປ້ນພິມພາສາລາວ ສຳລັບຄອມພິວເຕີ ແລະ ມືຖືລຸ້ນຕ່າງໆໄດ້ທີ່ເວັບໄຊເພັດຊະລາດ www.phetsarath.gov.la. ດັ່ງນັ້ນ, ຈຶ່ງອອກໃບແຈ້ງການສະບັບນີ້ ເພື່ອໃຫ້ທາງຮ້ານນຳເອົາຟອນ ແລະ ແປ້ນພິມພາສາລາວເຂົ້າໃນເຄື່ອງຄອມພິວເຕີ ແລະ ມືຖືຂອງທ່ານກ່ອນການຈຳໜ່າຍໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ບຸນສະເຫຼີມໄຊ ເຄນນາວົງ